**NEWS RELEASE**

UNITED NATIONS
HUMAN RIGHTS
SPECIAL PROCEDURES
SPECIAL RAPPORTEURS, INDEPENDENT EXPERTS & WORKING GROUPS

# ຊ່ຽວຊານຂອງ ສປຊ: ຍຸດທະສາດເສດຖະກິດຂອງ ສປປ ລາວ ສົ່ງຜົນກະທົບຕໍ່ຄວາມທຸກຍາກ

ວຽງຈັນ ( 28 ມີນາ 2019) - ສປປ ລາວ ໄດ້ນໍາໃຊ້ວິທີການຄຸ້ມຄອງບໍລິຫານຜ່ານຈາກຂັ້ນເທິງລົງສູ່ຂັ້ນລຸ່ມໃນການພັດທະນາເສດຖະກິດ ແລະ ລຶບລ້າງຄວາມທຸກຍາກເຊິ່ງແມ່ນວິທີການທີ່ມັກຈະບໍ່ໄດ້ຮັບຜົນດີເຊິ່ງຈະພາໃຫ້ເກີດມີຄວາມທຸກຍາກ ແລະ ສົ່ງຜົນກະທົບຕໍ່ສິດທິຂອງປະຊາຊົນຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດ, ໂດຍອີງຕາມການລາຍງານຂອງຊ່ຽວຊານຂອງອົງການສະຫະປະຊາຊາດທ່ານໜຶ່ງ.

"ເຖິງແມ່ນວ່າຈະມີຄວາມຄືບໜ້າທີ່ສໍາຄັນໃນການຫລຸດຜ່ອນຄວາມທຸກຍາກ, ບັນດານະໂຍບາຍເພື່ອສົ່ງເສີມການເຕີບໂຕເສດຖະກິດຂອງລັດຖະບານ ຍັງສົ່ງຜົນກະທົບທີ່ເປັນການທໍາລາຍຮູບແບບການດໍາລົງຊີວິດ, ການມີຜົນກະທົບບໍ່ດີຕໍ່ຜູ້ດ້ອຍໂອກາດ ແລະ ໃນຄວາມເປັນຈິງຍັງພາໃຫ້ປະຊາຊົນຈໍານວນໜຶ່ງມີຄວາມທຸກຍາກເພີ່ມຂຶ້ນໂດຍເຮັດໃຫ້ພວກເຂົາບໍ່ສາມາດເຂົ້າເຖິງການນໍາໃຊ້ທີ່ດິນ, ນໍາໃຊ້ຮູບແບບການດໍາລົງຊີວິດ, ແລະ ນໍາໃຊ້ຊັບພະຍາກອນ" ນີ້ແມ່ນຄໍາເວົ້າຂອງທ່ານ ຟີລິບ ອານສ໌ຕອນ, ຜູ້ລາຍງານຜູ້ພິເສດຂອງອົງການສະຫະປະຊາຊາດ ກ່ຽວກັບທຸກຍາກທີ່ສຸດ ແລະ ສິດທິມະນຸດ ໃນຕອນທ້າຍຂອງການມາຢ້ຽມຢາມເປັນທາງການເປັນເວລາ 11 ວັນ ຢູ່ໃນ ສປປ ລາວ.

"ເປັນທີ່ໜ້າເສຍດາຍທີ່ບັນດານະໂຍບາຍຂອງລັດຖະບານມັກຈະສຸມໃສ່ການລາຍງານສິ່ງທີ່ໄດ້ຈັດຕັ້ງປະຕິບັດ ແລະການປັບປຸງຕົວເລກ GDP ໃຫ້ດີຂຶ້ນແທນທີ່ຈະເຮັດການປ່ຽນແປງຢ່າງມີຄວາມໝາຍຕໍ່ຊີວິດຂອງປະຊາຊົນລາວ."
"ສປປ ລາວ ໄດ້ມີຄວາມຄືບຢ່າງໜ້າປະທັບໃຈ ໂດຍການຫລຸດຈໍານວນປະຊາຊົນທີ່ດໍາລົງຊີວິດທີ່ຢູ່ຕໍ່າກວ່າມາດຕະ ຖານການຫລຸດພົ້ນຄວາມທຸກຍາກລົງໄດ້ເຄິ່ງໜຶ່ງ, ໂດຍໄດ້ເພີ່ມອັດຕາການເຂົ້າໂຮງຮຽນ, ການຂະຫຍາຍອັດຕາການຊົມໃຊ້ໄຟຟ້າ ແລະສຸຂະພິບານ. ແຕ່ຢ່າງໃດກໍຕາມ ການເຕີບໂຕເສດຖະກິດທີ່ໄວວານັ້ນບໍ່ໄດ້ພາໃຫ້ມີການຫລຸດ ຜ່ອນຄວາມທຸກຍາກໄປຄຽງຄູ່ກັນຢ່າງສົມສ່ວນເທື່ອ."
ເກືອບໜຶ່ງສ່ວນສີ່ຂອງປະຊາກອນຂອງປະເທດຍັງດໍາລົງຊີວິດດ້ວຍຄວາມທຸກຍາກ ແລະ ຄາດຄະເນວ່າ ມີປະມານ 80 ເປີເຊັນ ຂອງທົ່ວປະເທດ ທີ່ຍັງມີປະຊາຊົນດໍາລົງຊີວິດຢູ່ໃນຄວາມສ່ຽງ ທີ່ຈະມີຄວາມທຸກຍາກ ທີ່ມີລາຍຮັບຕໍ່າກວ່າ 2.50 ໂດລາ ຕໍ່ມື້. "ແນວຄວາມຄິດພຽງໜຶ່ງດຽວຂອງລັດຖະບານແມ່ນສຸມໃສ່ບັນດາໂຄງການພັດທະນາພື້ນຖານໂຄງລ່າງຂະໜາດໃຫຍ່, ການຂຸດຄົ້ນຊັບພະຍາກອນ ແລະ ການລົງທຶນຂອງຕ່າງປະເທດ ເຊິ່ງເປັນການສ້າງວຽກເຮັດງານທໍາບໍ່ຫລາຍໃຫ້ແກ່ປະຊາຊົນລາວ, ພາໃຫ້ມີພັນທະການຊໍາລະໜີ້ຄືນຢ່າງຫລວງຫລາຍ ແລະ ນໍາຜົນປະໂຫຍດໃຫ້ແກ່ບັນດາກຸ່ມຄົນທີ່ມີຄວາມຮັ່ງມີແບບບໍ່ສົມສ່ວນກັນ," ນີ້ແມ່ນຄາເວົ້າຂອງຜູ້ຊ່ຽວຊານຂອງອົງການສະຫະປະ ຊາຊາດທ່ານດັ່ງກ່າວ.

"ຂ້າພະເຈົ້າໄດ້ໄປເຫັນສະພາບຕົວຈິງແລ້ວວ່າ ຍຸດທະສາດດັ່ງກ່າວນີ້ອາດມີຄວາມຜິດພາດຢູ່ແຂວງອັດຕະປື ເຊິ່ງແມ່ນບ່ອນທີ່ບັນດາຜູ້ລອດພົ້ນຈາກເຫດການເຂື່ອນໄຟຟ້າເພພັງປີກາຍນີ້ ເຊິ່ງພວກເຂົາພວມດໍາລົງຊີວິດຢູ່ໃນບັນດາສູນພັກເຊົາຊົ່ວຄາວທີ່ມີຄວາມແອອັດ. ພວກເຂົາໄດ້ບອກຂ້າພະເຈົ້າວ່າ ພວກເຂົາບໍ່ມີເງິນທີ່ຈະສົ່ງລູກໄປໂຮງໝໍ ແລະ ກໍາລັງຈະຢູ່ໃນສະພາບທີ່ມີໜີ້ສິນ," ນີ້ຄໍາເວົ້າຂອງທ່ານ ອານສ໌ຕອນ. "ສະພາບການທີ່ພວມເປັນຢູ່ຂອງເຂົາ ເຈົ້າເຫລົ່ານັ້ນມັນແມ່ນສັນຍານເຕືອນໄພອັນໜຶ່ງ

ຕໍ່ການກຽມຄວາມພ້ອມຂອງປະເທດ ເພື່ອຮັບມືກັບການປ່ຽນ ແປງຂອງດິນຟ້າອາກາດ, ເຊິ່ງແນ່ນອນແລ້ວວ່າຍັງຈະມີເຫດການໄພພິບັດທີ່ເກີດຈາກດິນຟ້າອາກາດຢ່າງຮ້າຍແຮງເພີ່ມຂຶ້ນ ແລະ ຈະມີຜົນກະທົບແບບບໍ່ສົມສ່ວນຕໍ່ປະຊາຊົນຜູ້ທຸກຍາກຜູ້ທີ່ມີຄວາມສາມາດໜ້ອຍທີ່ສຸດໃນການຫລຸດຜ່ອນຄວາມສ່ຽງ.“

ໂດຍການເນັ້ນໜັກໃສ່ການເຕີບໂຕທາງເສດຖະກິດທີ່ເພີ່ມຂຶ້ນເລື້ອຍໆທີ່ແນ່ໃສ່ຫລຸດຜ່ອນຄວາມທຸກຍາກ, ການສ້າງວຽກເຮັດງານທໍາ, ແລະ ການເຄື່ອນໄຫວທາງເສດຖະກິດ-ສັງຄົມ, ລັດຖະບານໄດ້ບັນລຸການເຕີບໂຕຂອງ GDP ຢ່າງໜ້າປະທັບໃຈ ແຕ່ວ່າ ບໍ່ສາມາດເຮັດການປ່ຽນແປງຢ່າງມີຄວາມໝາຍຕໍ່ຊີວິດຂອງປະຊາຊົນຈໍານວນຫລວງ ຫລາຍທີ່ຍັງທຸກຍາກຢູ່.
ໃນຂະນະດຽວກັນ ປະເທດໄດ້ພັດທະນາລະບົບການປົກປ້ອງທາງສັງຄົມທີ່ເຂັ້ມແຂງອັນ ໜຶ່ງຂຶ້ນມາເພື່ອສະໜັບສະໜູນປະຊາຊົນຈໍານວນຫລາຍຜູ້ທີ່ຍັງຖືກປ່ອຍປະຢູ່ເບື້ອງຫລັງໃນໄລຍະເສດຖະກິດຂ້າມ ຜ່ານ ແລະ ຍັງບໍ່ສາມາດລົງທຶນຢ່າງພຽງພໍເຂົ້າໃນວຽກງານສາທາລະນະສຸກ, ການສຶກສາ ພື້ນຖານໂຄງລ່າງ ແລະ ການຫລຸດຜ່ອນຄວາມທຸກຍາກ, ນີ້ແມ່ນຄໍາເວົ້າຂອງທ່ານ ອານສ໌ຕອນ.
ຍັງມີພາກພື້ນ ຂອງປະເທດທີ່ໄດ້ຖືກປ່ອຍປະໄວ້ຢູ່ເບື້ອງຫລັງ. “ແມ່ຍິງທີທຸກຍາກຍັງຕ້ອງເດີນຕາມຄວາມເຊື່ອແບບອີງໃສ່ຫົວໜ້າຄອບຄົວ ແລະ ສະຖາບັນຕ່າງໆ ເຊິ່ງພວກເຂົາບໍ່ໄດ້ເຂົ້າຮ່ວມຂະບວນການຕັດສິນບັນຫາ ແລະ ເປັນຜູ້ດ້ອຍໂອກາດຫລາຍທີ່ສຸດ ເຊິ່ງກ່ຽວຂ້ອງກັບການເຂົ້າເຖິງການສຶກສາ ແລະ ການເຂົ້າເຖິງວຽກເຮັດງານທໍາ ທີ່ຢູ່ໃນລະບົບ ແລະ ຕໍາແໜ່ງງານ ທີ່ມີອໍານາດ. ບັນດາຊົນເຜົ່າສ່ວນນ້ອຍ ແລະ ປະຊາຊົນພື້ນເມືອງຍັງສືບຕໍ່ມີຄວາມທຸກຍາກ ເຊິ່ງແມ່ນອັດຕາຄວາມທຸກຍາກທີ່ສູງກວ່າກຸ່ມລາວໄຕ ເຊິ່ງແມ່ນກຸ່ມປະຊາຊົນສ່ວນໃຫຍ່. ປະຊາຊົນ ຢູ່ໃນເຂດຊົນນະບົດ ຍັງຖືກປ່ອຍປະຢູ່ເບື້ອງຫລັງໃນໄລຍະທີ່ມີຄວາມຄືບໜ້າທາງເສດຖະກິດ, ແລະ ປະຊາຊົນຈໍາ ນວນຫລາຍຍັງບໍ່ມີເສັ້ນທາງ, ບໍ່ມີນໍ້າໃຊ້ ແລະ ບໍ່ມີໄຟຟ້າ. ເດັກນ້ອຍຍັງປະເຊີນອຸປະສັກຢ່າງຫລວງຫລາຍໃນການສຶກສາ ແລະ ຍັງມີອັດຕາສູງຂອງແຮງງານເດັກ ແລະ ການແຕ່ງງານຕັ້ງແຕ່ອາຍຸ ຍັງນ້ອຍຢູ່.”
“ໃນສິ່ງທີ່ໄດ້ກ່າວພັນລະນາຢູ່ໃນ 'ການວາງນະໂຍບາຍທີ່ມີຢູ່ໃນຄໍາກ່າວຢືນຢັນ ທີ່ມີລັກສະນະຈູງໃຈ', ບັນດາເຈົ້າໜ້າທີ່ຂອງລັດຖະບານໄດ້ມີຄວາມກະຕືລືລົ້ນທີ່ຈະເວົ້າສູ່ຟັງກ່ຽວກັບບັນດາເປົ້າໝາຍ ແລະ ອະທິບາຍກ່ຽວກັບບັນດາແຜນການທີ່ໄດ້ວາງໄວ້, ແຕ່ວ່າສ່ວນຫລາຍມັກຈະບໍ່ສາມາດສະໜອງຫລັກຖານໄດ້ ກ່ຽວກັບວ່າ ນະໂຍບາຍຂອງພວກເຂົາໄດ້ມີຜົນປະໂຫຍດແນວໃດຕໍ່ປະຊາຊົນໃນຄວາມເປັນຈິງ ຫລື ແນວຄວາມຄິດທີ່ສະເພາະເຈາະຈົງກ່ຽວກັບວ່າບັນດາເປົ້າໝາຍດັ່ງກ່າວຈະໄດ້ຖືກບັນລຸຄືແນວໃດ,“ ນີ້ແມ່ນຄໍາເວົ້າຂອງທ່ານ ອານສ໌ຕອນ.
ຜູ້ລາຍງານພິເສດດັ່ງກ່າວໄດ້ມາຢ້ຽມຢາມນະຄອນຫລວງວຽງຈັນ, ແຂວງອັດຕະປື, ຈໍາປາສັກ, ຊຽງຂວາງ ແລະ ແຂວງຫົວພັນ ໃນໄລຍະວັນທີ 18 ຫາ 28 ມີນາ. ທ່ານ ຜູ້ລາຍງານພິເສດດັ່ງກ່າວໄດ້ໄປຢ້ຽມຢາມພົບປະກັບບັນດາພະນັກງານແພດສຸກສາລາ, ຊາວກະສິກອນ, ແມ່ຍິງຕໍ່າຫູກ, ຄູອາຈານຢູ່ໂຮງຮຽນ, ຄະນະພັດທະນາການສຶກສາຂັ້ນບ້ານ, ຕົວແທນຂອງສະຫະພັນແມ່ຍິງລາວ ແລະ ຄະນະປົກຄອງບ້ານ, ແລະ ນອກຈາກນັ້ນຍັງໄດ້ພົບປະກັບບັນດາເຈົ້າໜ້າທີ່ຂອງລັດຂອງຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນສູນກາງ.
“ການທີ່ມີການຄວບຄຸມຢູ່ທຸກທີ່ທຸກບ່ອນໃນສັງຄົມໄດ້ພາໃຫ້ມີຄວາມຈໍາກັດໃນການສົນທະນາທີ່ສໍາຄັນ ແລະ ພາໃຫ້ປະຊາຊົນລາວບໍ່ສາມາດໃຊ້ສິດສຽງກ່ຽວກັບເລື່ອງທີ່ມີຄວາມສໍາຄັນໃນການຊອກຫາວິທີການແກ້ໄຂບັນຫາທາງສັງຄົມທີ່ແຜ່ລາມ,“ ນີ້ແມ່ນຄໍາເວົ້າຂອງທ່ານ ອານສ໌ຕອນ. “ຫລາຍເຫດການສໍາຄັນທີ່ໄດ້ເກີດຂຶ້ນ ເຊັ່ນການໃຊ້ມາດຕາການຕອບໂຕ້, ການຈັບຕົວ, ແລະ ການສູນຫາຍຂອງບຸກຄົນຜູ້ທີ່ພະຍາຍາມຕໍ່ຕ້ານຢ່າງນິ້ມນວນຕໍ່ການປະຕິບັດ ເປັນການສົ່ງສັນຍານທີ່ເຂັ້ມງວດ ແລະ ເປັນສັນຍານທີ່ມີປະສິດທິຜົນຕໍ່ປະຊາຊົນລາວ ຜູ້ທີ່ຢາກເຂົ້າຮ່ວມໃນການແກ້ໄຂບັນດາບັນຫາທີ່ສໍາຄັນ ແລະ ສະຫລັບຊັບຊ້ອນຂອງລັດ,” ນີ້ແມ່ນທ່ານໄດ້ກ່າວຕື່ມ. “ການທີ່ລັດຖະບານໄດ້ເຊີນໃຫ້ຜູ້ລາຍງານພິເສດເຂົ້າມາປະເມີນສະພາບການຢູ່

ພາຍໃນປະເທດແມ່ນສິ່ງທີ່ຊຸກຍູ້ສົ່ງເສີມ, ແລະ ຂ້າພະເຈົ້າຂໍສະເໜີໃຫ້ລັດຖະບານຈົ່ງສືບຕໍ່ແນວໂນ້ມທີ່ໄດ້ປະຕິບັດໃນບໍ່ດົນມານີ້ໃນການມີສ່ວນຮ່ວມເພີ່ມຂຶ້ນກັບລະບົບສິດທິມະນຸດຂອງອົງການສະຫະປະຊາຊາດ.”

“ບັນດາຄູ່ຮ່ວມພັດທະນາມັກຈະຫລີກເວັ້ນຈາກຫລາຍບັນຫາເຫລົ່ານີ້, ແລະ ອົງການ ສປຊ ເອງ ກໍ່ປະກົດວ່າບໍ່ຄ່ອຍຈະປະຕິບັດໃນສິ່ງທີ່ພວກເຂົາເຈົ້າສາມາດປະຕິບັດໄດ້ເພື່ອເປັນກະບອກສຽງໃຫ້ປະຊາຊົນຜູ້ທີ່ດ້ອຍໂອກາດ ແລະ ໃຫ້ແກ່ສິດທິມະນຸດ,” ນີ້ແມ່ນຄຳເວົ້າຂອງທ່ານ ອັນສ໌ຕອນ.

“ມັນບໍ່ຈຳເປັນທີ່ຕ້ອງເປັນໄປແບບນີ້.  ຂ້າພະເຈົ້າໄດ້ພົບກັບປະຊາຊົນລາວແລ້ວຊຶ່ງແມ່ນຜູ້ທີ່ເຮັດວຽກຢ່າງໜ້າປະທັບໃຈເພື່ອຊ່ວຍເຫລືອຊຸມຊົນຂອງພວກເຂົາເອງ ແລະ ເພື່ອສະໜອງການບໍລິການດ້ານການຮັກສາສຸຂະພາບ ແລະ ການສຶກສາ ໃນບັນດາເຂດຊົນນະບົດ, ແລະ ໄດ້ພົບປະກັບເຈົ້າໜ້າທີ່ລັດຖະບານຫລາຍທ່ານຜູ້ທີ່ມີຄວາມເສຍສະຫລະຢ່າງຈະແຈ້ງ ແລະ ເລິກເຊິ່ງ ແລະມີຄວາມຫ້າວຫັນໃນການຊອກຫາວິທີການຕ່າງໆທີ່ມີປະສິດທິຜົນ,” ນີ້ແມ່ນຄຳເວົ້າຂອງທ່ານ ອານສ໌ຕອນ.  “ຖ້າວ່າລັດຖະບານໄດ້ຮັບການຊຸກຍູ້ສົ່ງເສີມໃຫ້ຮັບຮອງເອົາບັນດານະໂຍບາຍທີ່ມີຄວາມໂປ່ງໃສ, ມີການເຂົ້າຮ່ວມຢ່າງມີຄວາມໝາຍ, ແລະ ມີການປຶກສາຫາລືແບບເປີດກ້ວາງທີ່ແທ້ຈິງ ລັດຖະບານຈະສາມາດບັນລຸຜົນສຳເລັດຢ່າງຫລວງຫລາຍໃນດ້ານການພັດທະນາແບບຍືນຍົງ ແລະ ການລົບລ້າງຄວາມທຸກຍາກ.”

ຈົບການຖະແຫລ່ງຂ່າວ

**ມີຮູບພາບຈາກການຢ້ຽມຢາມ ສປປ ລາວ ຂອງຜູ້ລາຍງານພິເສດ ໄວ້ໃຫ້ນັກຂ່າວນຳໃຊ້ ໃນແວັບໄຊທ໌ https://bit.ly/2JTbOEi**

***ທ່ານ ຟີລິບ ອາລສະຕອັນ (Philip Alston)*** *(ອົດສະຕຣາລີ) ຮັບໜ້າທີ່ເປັນ ຜູ້ລາຍງານພິເສດ ກ່ຽວກັບ ຄວາມທຸກຍາກທີ່ສຸດ ແລະ ສິດທິ ມະນຸດ ໃນເດືອນ ມິຖຸນາ 2014. ໃນຖານະເປັນ ຜູ້ລາຍງານພິເສດ, ທ່ານເປັນສ່ວນໜຶ່ງຂອງ ສິ່ງທີ່ເປັນທີ່ຮັບຮູ້ກັນໃນຖານະເປັນ ຂັ້ນຕອນ ພິເສດ ຂອງສະພາທີ່ປຶກສາວ່າດ້ວຍສິດທິມະນຸດ. ຂັ້ນຕອນພິເສດ, ເປັນອົງການທີ່ໃຫຍ່ທີ່ສຸດຂອງບັນດາຊ່ຽວຊານອິດສະຫຼະ ໃນລະບົບ ສິດທິ ມະນຸດ ຂອງ ສະຫະປະຊາຊາດ, ແມ່ນຊື່ທົ່ວໄປ ຂອງ ກົນໄກການຊອກຮູ້ຂໍ້ມູນຕົວຈິງ ແລະ ຕິດຕາມກວດກາແບບເອກະລາດຂອງສະພາ ທີ່ປຶກສາ ເຊິ່ງເລັ່ງໃສ່ສະພາບການສະເພາະຂອງປະເທດ ຫຼື ປະເດັນສະເພາະດ້ານ ໃນທຸກພາກຂອງໂລກ. ບັນດາຊ່ຽວຊານຂອງ ຂັ້ນຕອນ ພິເສດ ເຮັດວຽກແບບອາສາສະມັກ; ເຂົາເຈົ້າບໍ່ໄດ້ແມ່ນພະນັກງານຂອງ ສະຫະປະຊາຊາດ ແລະ ບໍ່ໄດ້ຮັບເງິນເດືອນ ສຳລັບ ການເຮັດວຽກຂອງ ເຂົາເຈົ້າ. ເຂົາເຈົ້າເປັນເອກະລາດ ໂດຍບໍ່ຂຶ້ນກັບລັດຖະບານໃດ ຫຼື ອົງການຈັດຕັ້ງໃດ ແລະ ຮັບໜ້າທີ່ດ້ວຍຄວາມສາມາດຂອງຕົນເອງ.*

*ສາມາດຕິດຕາມ ຜູ້ລາຍງານພິເສດໄດ້ທາງ ທະວິດເຕີ **Twitter** @Alston_UNSR ແລະ ເຟສບຸກ **Facebook** at www.facebook.com/AlstonUNSR*

*ສຳລັບຂໍ້ມູນເພີ່ມເຕີມ ແລະ **ສຳລັບສື່ມວນຊົນທີ່ຕ້ອງການຂໍຂໍ້ມູນເພີ່ມເຕີມ**, ກະລຸນາຕິດຕໍ່ ບາຊາມ ຄາວາຈາ (Bassam Khawaja) (+1 646 886 7211; bassam.khawaja@nyu.edu) ຫຼື ປາຕຣິເຊຍ ວາເຣລາ (Patricia Varela) (+41 79 444 3707; pvarela@ohchr.org)*

*ສຳລັບ**ສື່ມວນຊົນທີ່ຕ້ອງການສືບຖາມ** ກ່ຽວກັບ ຊ່ຽວຊານອິດສະຫຼະຂອງສະຫະປະຊາຊາດທ່ານອື່ນໆ ກະລຸນາຕິດຕໍ່ສອບຖາມນຳ ທ່ານ ເຈເຣມີ ລໍຣອງ (Jeremy Laurence), ໜ່ວຍງານສື່ມວນຊົນ - ດ້ານສິດທິມະນຸດຂອງສະຫະປະຊາຊາດ (UN Human Rights – Media Unit) (+41 22 917 9383 / jlaurence@ohchr.org)*